# ທ່ານ ຄຳພຸດ ສິດທິລາດ

# ໄດ້ຮັບການແຕ່ງຕັ້ງເປັນ ຜູ້ອຳນວຍການ ທຄຕລ ຄົນໃໝ່




ໃນວັນທີ 14 ມິຖຸນາ ທີ່ຜ່ານມາ ທຄຕລ ໄດ້ຈັດພິທີປະກາດການຈັດຕັ້ງ ມອບ-ຮັບ ໜ້າທີ່ຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໂດຍ ທ່ານ ຄຳພຸດ ສິດທິລາດ ໄດ້ຖືກແຕ່ງຕັ້ງເປັນຜູ້ອຳນວຍການ ທຄຕລ ແທນ ທ່ານ ພູຂົງ ຈັນທະຈັກ ໃນວັນທີ 14 ມິຖຸນາ ທີ່ ໂຮງແຮມແລນມາກຢ່າງເປັນທາງການ ແລະ ທ່ານ ພູຂົງ ຈັນທະຈັກ ແມ່ນໄດ້ຮັບການແຕ່ງຕັ້ງເປັນ ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ ທະນາຄານແຫ່ງ ສປປ ລາວ.

ການຮັບຕຳແໜ່ງໃນຄັ້ງນີ້ ມີພາລະກິດທີ່ຕ້ອງສືບຕໍ່ເລັ່ງຜັກດັນ ທຄຕລ ດ້ວຍ ວິໄສທັດທີ່ມຸ້ງໝັ້ນໃຫ້ ທຄຕລ **"ເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ໄດ້ມາດຖານສາກົນ"**, ລວມທັງການພັດທະນາລະບົບທະນາຄານການຄ້າໃຫ້ເປັນດິຈິຕອລເຕັມຮູບແບບ ເພື່ອເປັນສ່ວນໜຶ່ງໃນການຂັບເຄື່ອນເສດຖະກິດຂອງປະເທດໃຫ້ກ້າວຜ່ານວິກິດເສດຖະກິດ ພ້ອມກ້າວໄປຂ້າງໜ້າຢ່າງບໍ່ຢຸດຢັ້ງ ແລະ ຕອບໂຈດຄວາມຕ້ອງການຂອງລູກຄ້າ, ພາຍໃຕ້ການສ້າງຄວາມເພິ່ງພໍໃຈໃຫ້ກັບລູກຄ້າ ດ້ວຍການປະສົມປະສານກັນຂອງພະນັກງານທະນາຄານເຂົ້າກັບຄວາມສະຫຼຽວສະຫຼາດຂອງປັນຍາປະດິດ ຫຼື ເທັກໂນໂລຊີທັນສະໄໝ ອັນນຳມາເຊິ່ງແນວຄິດດ້ານນະວັດຕະກຳທາງການເງິນໃໝ່, ເປັນຜູ້ໃຫ້ບໍລິການທີ່ຮູ້ໃຈລູກຄ້າ ດ້ວຍຊ່ອງທາງດິຈິຕອລທີ່ລ້ຳສະໄໝ ສ້າງຜະລິດຕະພັນ ແລະ ການບໍລິການທີ່ມອບປະສົບການທີ່ດີໃຫ້ກັບລູກຄ້າທີ່ເໜືອຄວາມຄາດໝາຍ ຕອບໂຈດການໃຊ້ຊີວິດປະຈຳວັນ ແລະ ເຮັດທຸລະກິດໃນທຸກສະຖານທີ່ ທຸກເວລາທີ່ລູກຄ້າຕ້ອງການ ແລະ ສ້າງຜົນປະໂຫຍດສູງສຸດໃຫ້ແກ່ຜູ້ຖືຮຸ້ນ ທຄຕລ ແບບຍືນຍົງ ພາຍໃຕ້ຄຳຂວັ້ນ **"ທັນສະໄໝ ວ່ອງໄວ ໝັ້ນໃຈ"** ດ້ວຍການນຳເທັກໂນໂລຢີ ແລະ ນະວັດຕະກຳມາປະຍຸກໃຊ້ໃນການບໍລິຫານຈັດການ ແລະ ໃຫ້ບໍລິການທາງການເງິນດິຈິຕອລ.

**ໂດຍມີເປົ້າໝາຍຄື:**

- ຮັບປະກັນການຂະຫຍາຍຕົວຂອງທຸລະກິດໃຫ້ມີຄວາມສະຖຽນ, ເຂັ້ມແຂງທາງດ້ານການເງິນ ແລະ ຍືນຍົງ.
- ການບໍລິການທີ່ມີຄວາມທັນສະໄໝ ແລະ ນໍາໃຊ້ນະວັດຕະກໍາໃໝ່ໃນທຸລະກິດທະນາຄານ ເພື່ອຫັນສູ່ຮູບແບບການບໍລິການທີ່ເປັນ Digital Banking ໃຫ້ຫຼາຍຂຶ້ນ.
- ພັດທະນາບຸກຄະລາກອນຮອບດ້ານໃຫ້ເປັນຊ່ຽວຊານ ແລະ ເປັນມືອາຊີບ.
- ຍຶດຖືລູກຄ້າເປັນໃຈກາງໃນການຮັກສາຖານລູກຄ້າເກົ່າ, ຂະຫຍາຍຖານລູກຄ້າໃໝ່ ແລະ ການສ້າງຄວາມເພິ່ງພໍໃຈ.
- ສ້າງຜົນປະໂຫຍດທີ່ຍືນຍົງໃຫ້ແກ່ຜູ້ຖືຮຸ້ນ ທຄຕລ ແລະ ປະກອບເປັນສ່ວນໜຶ່ງຂອງສັງຄົມ.
- ເພື່ອເຮັດໃຫ້ທະນາຄານສາມາດປະຕິບັດໄດ້ເງື່ອນໄຂລະບຽບການຂອງບັນດາມາດຕະຖານຕ່າງໆຂອງສາກົນ.

**ພາຍໃຕ້ຄຸນຄ່າຫຼັກ (Core Value) ດັ່ງນີ້:**

1. ຖືລູກຄ້າເປັນຈຸດສູນກາງ (Customer Centric), 2. ມີຄວາມຊື່ສັດ (Integrity), 3. ເນັ້ນປະສິດທິພາບການດໍາເນີນທຸລະກິດ (Effective Work), 3. ຮັບຮູ້ການເປີດກວ້າງ (Embracing Change) ແລະ ກຽມພ້ອມຕໍ່ການເຊື່ອມໂຍງທາງການເງິນຕາມກອບຂອງອາຊຽນ ແລະ ສາກົນ, 4. ມີຄວາມຮັບຜິດຊອບຕໍ່ສັງຄົມ (Social Responsibility).

**ແນວໂນ້ມ ແລະ ທິດທາງ ໃນຕໍ່ໜ້າ**

ໃນການຂັບເຄື່ອນອົງກອນໄປສູ່ອານາຄົດຂ້າງໜ້າ ໃນສະພາບແວດລ້ອມຂອງການດໍາເນີນທຸລະກິດທີ່ມີຄວາມທ້າທາຍ ແລະ ມີການປ່ຽນຕະຫຼອດເວລາ ການຄາດການຕ່າງໆເຮັດໄດ້ຍາກຂຶ້ນສິ່ງທີ່ຕ້ອງເຮັດຄື ຕ້ອງປັບຕົວໄດ້ໄວ ເຖິງແມ່ນວ່າໃນປີ 2020-2021 ສະພາບເສດຖະກິດມະຫາພາກຂອງສາກົນ ແລະ ພາຍໃນປະເທດຈະໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດ COVID-19 ເວົ້າລວມ, ເວົ້າສະເພາະກໍ່ຄືສະພາບ ການດໍາເນີນທຸລະກິດຂອງ ທຄຕລ ທີ່ຈະໄດ້ຮັບຜົນກະທົບທາງກົງ ແລະ ທາງອ້ອມ. ສະນັ້ນ; ເພື່ອບັນລຸວິໄສທັດຂອງ ທຄຕລ ໃນຕໍ່ໜ້າເວົ້າລວມ ເວົ້າສະເພາະປີ 2021-2025, ພາລະກິດທີ່ສໍາຄັນຂອງ ທຄຕລ ແມ່ນຈະໄດ້ສືບຕໍ່ເພີ່ມປະສິດທິພາບໃນການດໍາເນີນງານໃຫ້ມີຄວາມເຂັ້ມແຂງ, ລິເລີ່ມຈັດຕັ້ງປະຕິບັດແຜນ ປັບປຸງພາລະກິດທີ່ສໍາຄັນ ຂອງ ທຄຕລ 2021-2025 ຄື: ເຮັດໃຫ້ ທຄຕລ ກາຍເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ໄດ້ມາດຖານສາກົນ, ສຸມໃສ່ການພັດທະນາການປັບປຸງດ້ານບໍລິການໃຫ້ແທດເໝາະກັບໄລຍະການປ່ຽນໃໝ່, ສ້າງຄວາມເຂັ້ມແຂງໝັ້ນຄົງທາງດ້ານການເງິນ, ພັດທະນາລະບົບໄອທີ ແລະ ເທັກໂນໂລຊີທີ່ທັນສະໄໝ ເຂົ້າໃນລະບົບບໍລິການພັດທະນາດ້ານລະບົບຂໍ້ມູນຂ່າວສານໃຫ້ຖືກຕ້ອງ, ຊັດເຈນ ໂປ່ງໃສ, ວ່ອງໄວ ແລະ ຮັບປະກັນຄວາມປອດໄພໄດ້ມາດຖານສາກົນ. ພ້ອມນັ້ນ; ກໍ່ເນັ້ນໃສ່ການພັດທະນາບຸກຄະລາກອນ ໃນແຕ່ລະດ້ານເພື່ອຮອງຮັບກັບການປ່ຽນແປງຂອງການພັດທະນາ ທຄຕລ ໃຫ້ມີຄວາມຊໍານິຊໍານານເປັນມືອາຊີບດ້ານການບໍລິການທະນາຄານ, ສ້າງຄວາມເພິ່ງພໍໃຈໃຫ້ກັບລູກຄ້າທີ່ມາໃຊ້ບໍລິການ ແລະ ສ້າງຜົນປະໂຫຍດສູງສຸດໃຫ້ແກ່ຜູ້ຖືຮຸ້ນ ທຄຕລ ແບບຍືນຍົງ.

**ດ້ວຍຍຸດທະສາດການພັດທະນາຂອງ ທຄຕລ ຄື:**

1. **ສ້າງຄວາມເຂັ້ມແຂງໃຫ້ກັບອົງກອນຢ່າງຮອບດ້ານ:** ການບໍລິຫານການເງິນ ແລະ ເພີ່ມປະສິດທິພາບການດໍາເນີນທຸລະກິດໃຫ້ຍືນຍົງ, ການຄຸ້ມຄອງ ແລະ ບໍລິຫານສິນເຊື່ອ, ການພັດທະນາບໍລິຫານບຸກຄະລາກອນໃຫ້ເຂັ້ມແຂງ ແລະ ມີປະສິດທິພາບ, ສ້າງລະບົບຄຸ້ມຄອງຄວາມສ່ຽງ ແລະ ສ້າງພື້ນຖານຕ້ານການຟອກເງິນໃຫ້ເຂັ້ມແຂງ, ພັດທະນາການຄຸ້ມຄອງບໍລິຫານໃຫ້ໄດ້ມາດຖານສາກົນ ແລະ ສ້າງມາດຕະຖານໃຫ້ເປັນທະນາຄານອາຊຽນ Qualified ASEAN Bank (QAB).
2. **ຍຸດທະສາດທັນເປັນທັນສະໄໝໂດຍນໍາໃຊ້ເຕັກໂນໂລຊີ ແລະ ນະວັດຕະກໍາໃໝ່ໆໃນການດໍາເນີນທຸລະກິດກ້າວສູ່ຍຸກເສດຖະກິດດີຈິຕອລ:** ການພັດທະນາ ແລະ ການຄຸ້ມຄອງລະບົບໄອທີ ທັນລະບົບໄອທີເປັນຄວາມທັນສະໄໝ, ຄຸ້ມຄອງບໍລິຫານຂໍ້ມູນ ແລະ ການພັດທະນາວຽກງານສະຖິຕິ ໃຫ້ທັນສະໄໝໄດ້ມາດຖານສາກົນ ແລະ ມີຄຸນນະພາບ, ພັດທະນາຜະລິດຕະພັນເພື່ອທັນສູ່ການບໍລິການ ໃນຮູບແບບ Digital Banking: ການພັດທະນາການບໍລິການ, ການພັດທະນາດ້ານຜະລິດຕະພັນອີເລັກໂທນິກ (ການພັດທະນາການຊໍາລະສະສາງ Bill Payment, i-Bank ແລະ BCEL One ໃຫ້ມີຄວາມທັນສະໄໝ), ການພັດທະນາຄຸ້ມຄອງຄວາມສ່ຽງ, ບໍລິການ E-Commerce ແລະ ການຄຸ້ມຄອງລະບົບ, ການພັດທະນາການບໍລິການ EDC ແລະ QR Code.
3. **ຍຸດທະສາດສ້າງການຄຸ້ມຄອງ ແລະ ບໍລິການຕາມມາດຕະຖານສາກົນ:** ການປັບປຸງ, ພັດທະນາລະບົບບັນຊີ ແລະ ມາດຕະຖານການລາຍງານການເງິນ, ພັດທະນາ ແລະ ປັບປຸງລະບົບກວດກາໃຫ້ເຂັ້ມແຂງໄດ້ມາດຕະຖານ, ພັດທະນາໂຄງການ PCI Compliance ຫຼື (Payment Card Industry Data Security Standard).

- **ຊີວະປະຫວັດຫຍໍ້ ທ່ານ ຄໍາພຸດ ສິດທິລາດ ຜູ້ອໍານວຍການ ທຄຕລ ຄົນໃໝ່**

**ທ່ານ ຄໍາພຸດ ສິດທິລາດ**

ຜູ້ອໍານວຍການ ທຄຕລ

**ຊີວະປະຫວັດຫຍໍ້:**

ວັນເດືອນປີເກີດ: 28/4/1965

ສັນຊາດ: ລາວ

ພາກສາ: ອັງກິດ, ລັດເຊຍ

ຕໍາແໜ່ງ: ຜູ້ອໍານວຍການທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

**ປະຫວັດການສຶກສາ:**

- ປີ 2009: ຊັ້ນສູງທິດສະດີການເມືອງ-ການປົກຄອງຈາກສະຖາບັນການເມືອງ-ການປົກຄອງແຫ່ງຊາດ;
- 1997-1998: ປະລິນຍາໂທດ້ານເສດຖະສາດ ຈາກປະເທດຍີ່ປຸ່ນ;
- 1987-1993: ປະລິນຍາໂທດ້ານເສດຖະສາດ, ການເງິນ ແລະ ສິນເຊື່ອ (ໃບປະກາດແດງ) ຈາກປະເທດລັດເຊຍ.

**ປະຫວັດການເຮັດວຽກ:**

- 2021 ຮອດປະຈຸບັນ: ຖືກແຕ່ງຕັ້ງເປັນຜູ້ອຳນວຍການທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ;
- 2012-2021: ຖືກແຕ່ງຕັ້ງເປັນຫົວໜ້າກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ;
- 2010-2012: ຖືກແຕ່ງຕັ້ງເປັນຮັກສາການຫົວໜ້າກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ;
- 2007-2010: ຖືກແຕ່ງຕັ້ງເປັນຮອງຫົວໜ້າກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ;
- 2005-2007: ຖືກແຕ່ງຕັ້ງເປັນທີ່ປຶກສາຢູ່ຫ້ອງການກຸ່ມອາຊີຕາເວັນອອກສຽງໃຕ້ ຂອງກອງທຶນການເງິນສາກົນ, ປະເທດສະຫະລັດອາເມລິກາ;
- 2000-2005: ຖືກແຕ່ງຕັ້ງເປັນຮອງຫົວໜ້າກົມຄົ້ນຄວ້າເສດຖະກິດ, ທະນາຄານແຫ່ງ ສປປ ລາວ;
- 1999-2000: ຖືກແຕ່ງຕັ້ງເປັນຫົວໜ້າພະແນກຄົ້ນຄວ້າເສດຖະກິດຕ່າງປະເທດ ກົມຄົ້ນຄວ້າເສດຖະກິດ, ທະນາຄານແຫ່ງ ສປປ ລາວ;
- 1993-1999: ເປັນວິຊາການຢູ່ກົມຄົ້ນຄວ້າເສດຖະກິດ (ກົມນະໂຍບາຍເງິນຕາ) ທະນາຄານແຫ່ງ ສປປ ລາວ;
- 1983-1985: ເປັນວິຊາການບັນຊີຢູ່ທະນາຄານແຫ່ງລັດ ສາຂາຫຼວງພະບາງ.